ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ ຈັດຕັ້ງພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ 08 ມີນາ



ໃນວັນທີ 4 ມີນາ 2023 ຜ່ານມາ, ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 113 ປີ (08 ມີນາ 1910 - 08 ມີນາ 2023) ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ ແລະ ພະນັກງານການນຳຫຼັກແຫຼ່ງຂອງ ທຫລ.

ພາຍໃນພິທີ ໄດ້ຮັບຟັງການທວນຄືນປະຫວັດມູນເຊື້ອ ແລະ ຂະບວນການເຄື່ອນໄຫວຂອງແມ່ຍິງສາກົນ, ຊຶ່ງວັນແມ່ຍິງສາກົນ 08 ມີນາ ເປັນວັນແຫ່ງປະຫວັດສາດຂອງແມ່ຍິງໃນທົ່ວໂລກ.





ຫຼັງຈາກນັ້ນ, ແຂກຜູ້ເຂົ້າຮ່ວມພິທີຍັງໄດ້ຮັບຟັງການເຜີຍແຜ່ໃນຫົວຂໍ້: 'ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ', ການລາຍງານການຈັດຕັ້ງປະຕິບັດເພື່ອຄວາມສະເໝີພາບ ຍິງ-ຊາຍ ແລະ ວຽກແມ່-ເດັກ ໃນຂົງເຂດທະນາຄານ ແລະ ຮັບຟັງການເຜີຍແຜ່ໃຫ້ຄວາມຮູ້ກ່ຽວກັບການຮັກສາສຸຂະພາບໃນຫົວຂໍ້: 'ການຮັກສາສຸຂະພາບ ຕາມຫຼັກທໍາມະຊາດ'. ພາຍຫຼັງຜູ້ເຂົ້າຮ່ວມທັງໝົດໄດ້ຮັບຟັງການບັນຍາຍແລ້ວ ກໍ່ໄດ້ມີການແລກປ່ຽນຖາມ-ຕອບ ເພື່ອປະກອບຄໍາຄິດເຫັນ ຢ່າງກົງໄປກົງມາ ແລະ ເຮັດໃຫ້ບັນຍາກາດຂອງພິທີດໍາເນີນໄປດ້ວຍຄວາມຟົດຟື້ນ ແລະ ມ່ວນຊື່ນ.






ນອກຈາກນີ້ ທ່ານຜູ້ວ່າການ ທຫລ ຍັງໄດ້ໃຫ້ກຽດກ່າວອວຍພອນ ບັນດາການນໍາ ແລະ ພະນັກງານເພດຍິງໃນຂົງເຂດທະນາຄານ ແລະ ແມ່ຍິງທຸກທ່ານ ເນື່ອງໃນໂອກາດວັນແມ່ຍິງສາກົນ ທີ່ມີກຽດອັນສະຫງ່າລາສີ.

**# ຂ່າວ-ພາບ: ວັນປະເສີດ ສິມບຸນຂັນ.**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ**